ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 375/ກຄສງ
ນະຄອນຫຼວງວຽງຈັນ, ວັນທີ 05 ຕຸລາ 2018

# ແຈ້ງການ

ເຖິງ: ທ່ານ ຄະນະສະພາບໍລິຫານ ແລະ ຜູ້ຈັດການຂອງສະຖາບັນການເງິນ ທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຈາກ ທະນາຄານແຫ່ງ ສປປ ລາວ.

ເລື່ອງ: ການປະຕິບັດເຄື່ອງໝາຍຫົວໜ່ວຍຕົວເລກ ແລະ ຈຳນວນເສດສ່ວນ.

- ອີງຕາມ ກົດໝາຍວ່າດ້ວຍ ການບັນຊີ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013.
- ອີງຕາມແຈ້ງການ ການນຳໃຊ້ ພາສາ, ສະກຸນເງິນຕາ ແລະ ຕົວເລກຈຳນວນເງິນ ຂອງກະຊວງການເງິນ ສະບັບເລກທີ 3492/ຫກງ, ລົງວັນທີ 20 ທັນວາ 2017.

ກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ກ່ຽວກັບການປະຕິບັດເຄື່ອງໝາຍຫົວໜ່ວຍຕົວເລກ ແລະ ຈຳນວນເສດສ່ວນ ເຊັ່ນ ພັນ, ລ້ານ, ຕື້ ຂຶ້ນໄປ ໃຫ້ນຳໃຊ້ເຄື່ອງໝາຍຈ້ຳ (.) ແລະ ຈຳນວນເສດສ່ວນໃຫ້ນຳໃຊ້ເຄື່ອງໝາຍຈຸດ (,) ໃຫ້ສອດຄ່ອງກັບ ວັກທີສາມ ມາດຕາ 7 ຂອງກົດໝາຍວ່າດ້ວຍ ການບັນຊີ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013.

ດັ່ງນັ້ນ ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະບັດດ້ວຍ.

ຮ.ຫົວໜ້າກົມ

ທະນາຄານ ແຫ່ງ ສປປ ລາວ
ກົມຄຸ້ມຄອງສະຖາບັນການເງິນ

ວິໄລມິດ ອັກຄະວົງ